**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

0366
ເລກທີ .........../ກອຢ
ນະຄອນຫຼວງວຽງຈັນ,ວັນທີ 22 JAN 2024

# ໜັງສືແຈ້ງການ

**ເຖິງ:** ບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ.
**ເລື່ອງ:** ຫ້າມຈໍລະຈອນຈໍາໜ່າຍຜະລິດຕະພັນຢາທີ່ໃຊ້ສະເພາະໃນໂຮງໝໍ.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ຜົນການລົງຕິດຕາມ, ກວດກາຜະລິດຕະພັນຢາໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດປະຈໍາປີ 2023.

ຜ່ານການລົງຕິດຕາມ, ກວດກາການຈໍລະຈອນຈໍາໜ່າຍຜະລິດຕະພັນຢາໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດຂອງກອງກວດກາອາຫານ ແລະ ຢາ ໂດຍສົມທົບກັບກັບພາກສ່ວນກ່ຽວຂ້ອງ ເຫັນວ່າ ມີສະພາບການຈໍລະຈອນຈໍາໜ່າຍ ຜະລິດຕະພັນຢາທີ່ໃຊ້ສະເພາະໃນໂຮງໝໍຢູ່ໃນບັນດາຮ້ານຂາຍຍ່ອຍຢາ.

ສະນັ້ນ ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ ຈົ່ງຈັດຊື້ ແລະ ຈໍລະຈອນຈໍາໜ່າຍຢາທີ່ສາມາດຂາຍໄດ້ໃນຮ້ານຂາຍຍ່ອຍຢາ. ຫ້າມຈໍາໜ່າຍຢາທີ່ໃຊ້ສະເພາະໃນໂຮງໝໍເຊິ່ງແມ່ນຜະລິດຕະພັນຢາທີ່ກັບກ່ອງລະບຸຄໍາວ່າ Hospital only ຫຼື Hospital use only. ໃນກໍລະນີເຈົ້າໜ້າທີ່ລົງຕິດຕາມ, ກວດກາ ພົບການຈໍລະຈອນຈໍາໜ່າຍທີ່ບໍ່ຖືກຕ້ອງ ຈະດໍາເນີນການເຮັດບົດບັນທຶກ, ຍຶດອາຍັດ, ປັບໄໝ ແລະ ປະຕິບັດມາດຕະການຕໍ່ຮ້ານຂາຍຍ່ອຍຢານັ້ນຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

**ປອ. ດຣ. ບຸນຊູ ແກ້ວຫາວົງ**